ຟັງເດີ ບັນດິດ ຜູ້ຜຽາດີ, ໃຫ້ຄຶດ ຮ່ຳເພີງທ້ອນ, ຕັ້ງແຕ່ນີ້ ເມືອຫນ້າ, ກໍ່ເປັນ ບັ້ນບ່ອນ ຈີໄຂ.
ໄຂທັງ ຖາມຫາຂໍ້, ກໍ່ເປັນ ຄວາມຕິດເນື່ອງໄປນັ້ນ, ຕິດ ເນື່ອງຂຶ້ນ, ເຄີມຄວາງ ປະເທດລາວ.
ກົບ ວ່າຈີ ບິນບົນ ກັ້ງ, ຕາວັນ ໃຫ້ມົວມຶດ ຈີຄືລີ, ວ່າຈັກໄປ ຈ່ອງນ້າວ, ພູະຈັນ ແລ້ວຈີ່ງຈີ່ມາ ວານາ.
ອາກາດ ກູ້ມສູນ, ເມກມົວບົດ ແມ່ເຮີ້ຽ, ຕາວັນ ເລີ້ຽມືດມົວ ຄວັນກູ້ມ, ອູສາ ຍັງຍອມ ຮ້າງຮາມ,

ບາຣົດ ທະລາຍ ບໍ່ມີນໍ, ໄວ້ບາດ ຫນ້າຫຼັງພູ້ນ ຈີ່ງຄ່ຽຟັງ.

ເມື່ອຈີ່ ໄຂລະຫັດໃຫ້, ຈອມນິຣົມ ຮູ້ຮາງ ເຫັນນັ້ນ, ຢ່ານແຕ່ ອົກແມ່ ມາ ບໍ່ແຕື່ອງ,

ຈີ ອາຽຫນ້າ ເມື່ອລຸນ.

ແຮງຊ້ຳຕື່ມ ແຖມຖນັດໂອ້, ພາຽໃນ ນາມສ່ວາງ ແມ່ຄູນເຮີ້ຽ, ເມື່ອຈັກ ຮ້ອງຮຽກເອີ້ນ,

ຫາແກ້ວ ບໍ່ໄຊ່ການ.

ຄັນມັ່ກ ມາມົວ ຫຼົ້ງ, ອົນລະຫົນ ກໍ່ເຫັນ ຕ່າງໄປແລ້ວ, ເຈົ້າຫາກ ເປັນ ຜູ້ຮູ້,

ລືລຳ ຍອດພະຫຽາ ແມ່ເຮີ້ຽ.

ໃຜຜູ້ ມາໂຜດຣອ້ນ, ຄາວກີ່ວ ໃຫ້ເຖິງສຸກ ດັ່ງນັ້ນ, ຮຽມຈັກ ວອນວານຫາ, ເທັບພູະດາ ມາຄ້ຳ.
ຄັ້ງນີ້ ເຈັບແຕ່ ວັງຂອງຂັ້ນ, ຊົນລະທາ ຈີ ຍາວໂຍດ ແພງເຣີ້ຽ, ບໍ່ຊາຈີ ຊັ່ກໃຫ້ໄກ, ພໍ ຢືຢັງເຖິງ.
ເມື່ອຈັກ ເວົ້າຕໍ່ ທາສາ ຂ້າ, ທາສີ ປູະສີດ ເຊື່ອໃຈນັ້ນ, ບໍ່ໄຊ່ການ ຈະສີດ ເຊື່ອໄດ້,
        ຄຳແມ້ງ ແມ້ນໃຈ ຄີ່ນເຣີ້ຽ.
ອົກເຣີ້ຽ ຄຳ ກໍ່ຫາກເປັນ ຄຳແທ້, ຊົມພູ ມະນີເທັດ, ອັນໃຫ້ ສັບ ຫຼໍ່ເຂົ້າ, ທອງ ຄອ້ງ ບໍ່ຫ່ອນເປັນ.
ແມ່ເຣີ້ຽ ອັນວ່າ, ຫີນແລງ ເຊື້ອຟັງດິນ, ກໍ່ດູ ກໍ່າເສັ້ຽນັ້ນ, ອັນຈັກໃຫ້ ຜັດ ສີ່ງແກ້ວ,
        ພີທູນນັ້ນ ບໍ່ໃສການ.
ແມ່ເຣີ້ຽ ອ້ຽ ກໍ່ຫາກຫວານຫອມ ແຕ່ອ້ຽ, ເຊື່ອຊາດ ທັມະດາ ແມ່ເຣີ້ຽ, ເລົາກໍ່ ຫາກຫວານ ພໍເລົາ,
        ກໍ່ບໍ່ປານ ລຳອ້ຽ.
ອັນວ່າ ເຂົ້າຣໍ ຫຼ້າງ, ແຮງຂົມ ຂີວເຟື່ອນ ແມ່ເຣີ້ຽ, ອັນໃຫ້ ຂ້ຽວສີ່ງ ນ້ຳອ້ຽ, ໃນຫມໍ້ ກໍ່ບໍ່ຫວານ.
ຮຽມນີ້ ເຊື້ອ ລູກມ້າ, ບໍ່ມີຫຼີກ ຕາແສະ, ຈັກທະຍານ ໄປຕາມລົມ, ເພື່ອລະດູ ເຊີງຕົ້ນ.
ແມ່ເຣີ້ຽ ເຈົ້າຈີ ເກັບແມວ ຖີມ, ເອົາ ເສແສນຫນ່ວຽ ກໍ່ຕາມທອ້ນ, ຫົງບໍ່ມີ ຮ່າວຮອ້ນ,
        ຫນາວຫນ້າ ເຍືອງໄດ.
ຄັນວ່າ ຕັ້ງຽບໍ່ຍ້າຽ, ຈີປ່ວຽ ຄອບຄວາມ ບໍ່ຢ່າແລ້ວ, ຢ້ານທໍ່ ອາທະວາຈິດ ຄອບພັນ ບັງໄວ້.
ອາທະວາ ດັ້ງເຮືອ, ເວຈີ ຕັງວາດ ແມ່ເຣີ້ຽ, ຢ້ານແຕ່ ຕ້ອງ ແມ່ຊ້າງ,
        ສະແຄງຂວໍາ ແຂ່ວັງ ແມ່ເຣີ້ຽ.
ຕັ້ງຜອກ ຂີນຂັດ ຂ້ວາງທາງ, ຫົງຈີ ທຽວທ່ອງ ໄປນັ້ນ, ວ່າຢາກ ເມື່ອເບິ່ງ ຊ້າງ,
        ແຮມເຮື້ອ ທີ່ໄກ ວ່າເນ.
ຮູ້ວ່າ ສົນເທ ດັ້ງດ່ອມ, ທາງ ບໍ່ມີ ຮ່ອມຮູ້ນັ້ນ, ໄມ້ອໍ້ ມັນຈີ ຂວາງທາງ ຊ້າງ ຮ່ອມໄດ.
ຄຶດວ່າ ຢາກ ປາຖນາເວັ້ນ, ບູນຫຼາຽ ຈີ່ງມາຈວບ ແມ່ຄູນເຣີ້ຽ, ປານດັ່ງ ໂຊກແມ່ໄດ້,
        ກອ້ນລ້ານ  ຄຳເຂັມ ໃສ່ຖົງ.
ສັງບໍ່ ຍັບຄ່ຽນຕັ້ງຽ, ເວັ້ນຫຼີກ ຮາຊະຫົງ ສນຽນັ້ນ, ມາເປັນ ອາທະວະຈິດ, ຄອບແມວ ຈີຊົນ ຊ້າງ.
ແຄ້ນຄັ່ງ ໂຄນ ເສຕັ້ງຽ, ຢາກຊົນສີງ ຟ້າ ບໍ່ພ່າ ຕາຽລື, ຫົງຄຳ ຕົກສະເງີ້, ເກົາທີ້ນ ຄູດທວງ.
ມາອີດູ ເປັດ ເດ, ວ່າຈີຂັນ ດອມ ໄກ່ ບໍ່ຄືຕີ, ຕີນ ບໍ່ນ້າວ ສົງໃຫ້, ກໍ່ຢ່າ ຟ້າວ ວ່າຈີ ຂັນ.
ຜີວ່າ ຫຽັບ ແມວ ປ້າຽໃກ, ຫົງ ກໍ່ເນົາ ຄ່ອງ ກໍ່ຕາແລ້ວ, ຄັນວ່າ ຊ້າງ ໄດ້ຮຸກ ເຂົ້າໄກ້,
        ແມວ ຈີຄ້າງ ກວັງໂຄນ.
ຕັ້ງຽເຣີ້ຽ ສັງວ່າ ທຳຕະບະໃຫ້, ເອົາສີງ ກົ້ມກຼານ ຕົວນັ້ນ, ຢ້ານແຕ່ນ້ຳ ຈີຂື້ນ ຖ້ວມບ້ານ,

ເດືອນຫ້າ ລວາດເມືອງ.

ຫມານ້ຽ ຖືຄ່າ ຊ້າງ, ຊາຊົ່ງ ຣາຊຫົງ ແມ່ເຣີ້ຽ, ເດືອນຍີ່ ລົມ ບໍ່ເຕົ້າ, ເດືອນຫ້າ ຈີຕ່າວ ຫນາວ.

ອາທະວາ ດັ້ງດອມ, ເຣືອນ ບໍ່ມີ ຄີ່ຂາງ ນັ້ນ, ຄືດຍາກເດ ລົມກູ້ມ ມືດມົວ.

ມີເຣືອນມາ ບໍ່ມີ ຝາ ກັ້ງ, ປີວໄປ ເປັນຟຸ່ນ ເສັ້ຽນໍ, ໄຟ ບໍ່ມີອາດ ຕັ້ງຕົວໃດ້ ຣໍ່ລົມ.

ອັນວ່າ ກົບຂຽດ ຣ້ອງ, ຊັບສິ່ງ ຄວາມລະຫັດ, ວ່າຢາກ ບິນບົນ ເຫາະ, ເຜັນພູ້ະໂຍມ ຄູງຟ້າ.

ແຂນໂຂ ໄດ້ຫາ ເສື້ອ, ຖນອມຂວັນ ຕູ້ມຣົ່ມ ກໍ່ຕາມຫອ້ນ,ຫູ ຫວີ້ນ ຢາກໃສ ຕ້າງ,ຈີວາງໄວ້ ບ່ອນໃດ.

ອັນວ່າ ເສົາ ສູນເຂົ້າ, ເຕັງພູມ ຖ້ານຕໍາ, ຕາບອດ ຫຼຽວເບິ່ງ ຊ້າງ ພຽາເອ້ ມ່າຽໂຮງ.

ເທື່ອນີ້ ເຂົ້າສານ ຣ້ອງ, ຊົມແຊວ ຫາ ໄກ່, ມາອີດູ ຫວດ ເດ, ຈີ ຫນີລີ້ ຢູ່ທີ່ໃດ ແມ່ເຣີ້ຽ.

ລາຫູເຂົ້າ ເຕັງ ພູ່ມຜາສາດ, ຕາບອດ ແຫງນເບິ່ງ ຟ້າ, ພູ້ະຈັນແຈ້ງ ກໍ່ວ່າ ມົວ.

ຫູຫນວກ ຟັງ ລະຫັດບ້ານ, ການເມືອງ ກໍ່ຮູ້ ເຫດ ກອນນັ້ນ, ປາກກືກ ມັນໄດ້ເວົ້າ, ພານມື້ ກໍ່ຄໍ່າດາຽ.

ຕາບອດ ນັບລືກ ຟ້າ, ກໍ່ອ້ອມຂອບ ຈັກກະວານ ແມ່ເຣີ້ຽ, ຫູຫນວກ ຟັງແມວ, ຊັບຊີ້ງ ຫນູ ຫາຊີ້ນ.

ຕາບອດ ແລຫຼີ້ງຢ້ຽມ,ໄປໄກ ແສນໂຍດ, ບາດວ່າ ຕາດີ ຫຼຽວເບິ່ງ ຊ້າງ, ຈໍາຂາງ ກໍ່ບໍ່ເຫັນ.

ຫູຫນວກ ຟັງ ສຽງຄິ້ງ, ຫມູຫມາ ສະດູງຕື່ນ, ຕາບອດ ເຫັນ ຈີຈຽມ, ກໍ່ຍັງ ເວັນ ຊົ່ວວາ.

ປາກກືກ ໄຂ ຄວາມຕ້ານ, ປານສຽງ ຟ້າ ພ່າ, ຝູງຫມູ່ ຄົນ ປາກກ້ຽງ, ກົວຢ້ານ ຖນອບຕົວ.

ຂາເບັ້ຽ ກໍ່ຍັງ ຈັກໄປໄດ້, ຊາວວາ ແສນໂຍດ, ບາດວ່າ ເຕັ້ນ ຊວ່ງ ມ້າ, ກໍ່ໂດຽໄດ້ ດັ່ງ ຄນີງ.

ຕາໄສ ໄປແກ້ ຊ້າງ, ສາມວັນ ກໍ່ມາ ເປົ່າ, ຕາບອດ ໄປແຕ່ ເຊົ້າ, ກໍ່ຍັງໄດ້ ຣ່ວມງາຽ.

ຄັນວ່າ ໄຂລະຫັດ ຊ້າງ, ກໍ່ເຫັນ ເສືອ ມາຮອດ ແມ່ເຣີ້ຽ, ເມື່ອຈະ ສັ່ບຊີ່ງ ເນື້ອພານ, ກໍ່ຮູ້ ເມື່ອກົນ.

ສັງບໍ່ ເຍງດູ ຊ້າງ, ສາມຫົວ ຂາວເຜືອກ ແມ່ເຣີ້ຽ, ເຈົ້າ ຈີລ້ຽງ ລູກແບ້, ແພງໄວ້ ຮ່ອມໃດ້.

ຄັນວ່າ ສາດສນາ ສວ້ຽ, ກົນລະຫົນ ກໍ່ປັງເກີດ ມານັ້ນ, ກົບຂຽດ ຖື ຫອກງ້າວ, ໂຕນເຕັ້ນ ໄລ່ ງູ.

ຫມູຫມາ ຖືເອົາ ຄອ້ນ, ໄລ່ຕີ ເສືອ ສຽງສນັ່ນ, ຝູງຫມູ່ ຊ້າງແລະມ້າ, ສະຖຽນ ຣ້ອງ ທົ່ວໄພຽ.

ຢ່າໄດ້ ເຄືອນ ຫູ ຫໍ້, ທັງລາວ ຫຼົງປາ ນັ້ນເນີ, ສົມທີ່ຄືດ ບໍ່ໄດ້, ບັກແບ່ນຫນ້າ ໄຖນເຣືອງ ຣໍ່ໃຜ.

ໃຜຈັກ ຂັນມາ ອາສາແກ້, ຂໍກະແຈ ທາງຟ້າຣ້ອນ ກໍ່ລອງຫອ້ນ, ນໍລະສານ ຫາກຈີ ຕິດຈິດໄວ້,

ກະແຈທີ້ ບໍ່ຫ່ອນ ໄຂ.

ອັນວ່າ ຂໍກະແຈ, ທາງກໍ້າ ຍົດທີຍາ, ໄຂງ່າຽ ແມ່ຄູນເຣີ້ຽ, ຄັນແມ່ນ ຂໍກະແຈ ທາງເຈົ້າຟ້າ,

ວ້ອງໄຂ ບໍ່ໄດ້, ເຖີງເທົ້າ ຊົວຊີວັງ.

ຄົນ ລັກເປັນ ຄົນໃບ້, ໃຈເບົາ ຄິດບໍ່ຖືກ ແມ່ຄູນເຣີ້ຽ, ຕາບອດ ຈີບອກໃຫ້, ຕາແຈ້ງ ຫາກຈີ່ເຫັນ.

ຂາໂຂ ເຕັ້ນ ໄປໄກ ແສນໂຍດ, ແມ່ນວ່າ ແລ່ນ ຊວ່ງມ້າ, ພຽັນໄດ້ ດັ່ງໃຈ.

ຄັນວ່າ ຍ່າງ ບາດກວ້າງ, ໄດ້ຊົ່ວ ພັນວາ, ວ່າຢາກ ບິນບົນເຫາະ, ເຜັນພູະໂຍມ ຄູງຟ້າ.

ຂາວຂຽວເຫຼືອມ ດຳສະເທີນ, ກໍ່ວ່າຢາກ ປະໂຫດເດ, ບາດວ່າ ໄຊວຽກບ້ານ, ເຫນືອໄຕ້ ກໍ່ວ່າໄກ.

ເມື່ອຈັກ ໄຂລະຫັດ ນ້ຳ, ກົວເກັງ ພຽານາກ, ນາກເຣີ້ຽ ແຄ້ນຄັ່ງໄຊ້, ບໍ່ໄດ້ ກົວສະຫ້ານ ເງືອກງູ.

ເມື່ອບໍ່ໃຫ້ ໄຂລະຫັດ ເວົ້າ, ຈິເອົາ ອາຽ ເຕັງວາດ ກໍ່ຕາມທ້ອນ, ຫູຫນວກ ຟັງແມວ,

ສັບຊີ້ງ ເສືອ ຫາຊິ້ນ.

ພີ່ ບໍ່ຈົນ ທາງມ້າ, ອາສະໄນ ກໍ່ຄາ ເຄື່ອງຄຳນັ້ນ, ນໍລະສານ ຍັງຈີຕັ້ງ ຕ່າວຫນ້າ,ຖາມແຈ້ງ ຊູ້ຄວາມ.

ສົມທີ່ຄຶດ ຜາຽຜຽອງ, ມ້າ ບິນບົນ ອາກາດ, ນໍລະສານ ຮວາຽ ຂາຄົມ, ເປົ່າໄປ ເປັນ ນ້ຳ.

ສົມທີ່ຄຶດ ໄປເຖິງຫ້ອງ, ຈອມດຽ ຄິດສະກູດ ພາຽພູ້ນ, ໄດ້ ຮາກໄມ້ ຢາແກ້ວ ກ່າວຄືນ.

ນໍລະສານ ຖື້ເອົາໄດ້, ຢາດີ ອັນປະເສີດ, ມາໃສ່ ຄົນ ປ່ວຽເຮື້ອ, ນອນໄຂ້ ກໍ່ເລົາ ດີ.

ເຫັນວ່າ ແຫ ສວຽມ, ຄ້າວ ເຄິງຄູນ ຈີ ປ່ຽດາ ມອງລື, ແຄ້ນຄັ່ງ ເຄື່ອງ ໂຕ່ງກວ້າງ,

ທາງຂ້ຽ ຫາກຈີຖາມ.

ຖາມຄ່າວ ຜູ່ງເຄິງຄ້າວ, ຊັງເຜືອຽ ຢາກຝີງແດດ ກໍ່ຍັງລື,ຍັງຍາກ ໄຊ້ຫມູ່ຊ້ອນ,ຊອນດັ້ນ ທ່ຽວຖາມ.

ຖາມຄ່າວ ປາ ວ່າ, ໄຄ້ເກັດແລ້ບ ຕອງກາຽ ແດ່ເນີ, ທັງຊວາງ ເພາະໂຈກຄູນ ພູງເພັ້ຽ.

ໂສມງາມ ການເດັດ ປາ, ສະກາງ ວ່ານັ້ນ, ສັງ ເລົ່າມາ ດາປ້ຽ, ຈາກ້າ ສຽດຝົນ.

ຄືດັ່ງ ບົວຄຳ ຊ້ອນ, ມະນີວັນ ໄຂກູາບ ເດນໍ, ຝູງຫມູ່ ຕົມ ກະແດ້ງ, ໄຟ ຈີໄຫມ້ ມູ່ນຜົງ.

ທັງຫຼາຽ ຫຼາງເອົາ ຈວງຈັນ, ໂລມລູບ ຕົວນັ້ນ, ສັງເລົ່າ ມາຮ່າວເອົາ ຕົມຄວາຽ, ເກືອກຄີງ ທາເນືອ.

ແມ່ຫາກ ສະຫົວ ແລ້ວ, ເປັນສັງ ຈີກົ້ວ ຜູ່ນດິນນໍ, ບໍ່ໄດ້ ຫມິ່ນ ແຕ່ ຫນ້າ,

ຄີງເຈົ້າ ກໍ່ຫາກ ຫມອງ ແມ່ເຮີ້ຽ.

ເຈົ້າແມ່ ທຳເພດນັກ, ເກີງລ້ານ ຕ້ອງສະເດື່ອງ, ສະແຄງ ຂວິດ ແມ່ເຮີ້ຽ, ໂສມເສຽົາ ຄື ນາງຂູນ,

ກໍ່ຫ່າວ ທຽວທາງເວີງ.

ຄຶດວ່າ ແປ້ດລ່ຽມ, ຫນັກເກິ່ງ ລ້ານ ພູເຂົາ, ແສນຫນ່ວຽ ກໍ່ນັ້ນ, ຄືດັ່ງ ຫີນໃຫ່ຽ ຕັ້ງ,

ກາງ ແກ້ງ ບໍ່ໃຫ້ໄຫວ.

ຊ້ຳຄຶດ ອາທະວາ, ດັ້ງດອມ ຫີນກ້ອນໃຫ່ຽ ແມ່ຄູນເຮີ້ຽ, ດຽວນີ້  ອົກຂມອ່ມ, ໄດ້ ສະໂນ ຕ້າງ

ມາແລ້ວ ຈີ່ ຊັ່ງຊາ.

ຊັ້ນແມ່ນ ທົງປູ່ະໄທຽເຍືອນ, ຕາແລ ຫຼີງລ່ຳ ເອົາທ້ອນ, ອັນວ່າ ອົກຂມອ່ມພີ່,

ຈີ່ ເຫນ່ນຫນ້າ ເມືອຟ້າ ເບິ່ງດູ.

ຈີສ່ຽງ ຕາມ ສະໂນຝ່າຽ, ເອົາຕາ ພຍານາກ ເປັນທ້ອນ, ບໍ່ຫ່ອນ ເຄີຽໂລບລ້ຽວ, ລວງຖ້ຽ ຜີກໃຜ.

ຫຼອນວ່າ ບູນສະໂນໄດ້, ການເປັນ ຫີນ ແສນສ່ວນ ກໍ່ດີ, ຍັງຈິ ປູນພ່າໄວ້, ຊາຊ້າງ ເກີງເສີມ.
ເຈົ້າຢ່າໄດ້ ຕໍ່າຄ້ຽ, ກັ້ນໂສກ ຂຽ້ງອົກ ແມ່ເຮີ້ຍ, ຍັງຈິເອົາ ຄໍາແຖມ, ຕື່ມທອນ ດອມເຈົ້າ.
ເຊີນແມ່ ຍໍຍົກນ້າວ, ເອົາ ຫີນ ຊາຊົ່ງ ສະໂນນັ້ນ, ຂ້ຽ ຢູ່ພີ້ ຟາງໄບ້ ຈີ່ຄ່ຽ ແຍງ.
ພີ່ວ່າ ຕາມຕາໃບ້, ຄື ຫີນ ຈິເບົາກວ່າ ສາໂນຕີ, ເຊີນແມ່ ແຖມຕື່ມທອ້ນ, ຄືຈີ ເກື່ອເກິ່ງ ເສີມ.
ເຊີນແມ່ ມາທອນ ທອ້ນ, ສາມແສນ ເກົ້າຫມື່ນ ຄໍານັ້ນ, ໃຜບໍ່ໄດ້ ໄປທຽວ ນອ້ມ,

ຈາເວົ້າ ຈີຊົ່ງຊາ ແມ່ເຮີ້ຍ.

ຄຶດວ່າ ຈົມໃຈຫມັ້ນ, ຈິ່ງຍໍ ຫີນ ຕິດຊົ່ງ ສະໂນນັ້ນ, ຝູງຫມູ່ ຍຽແລະເປັງ, ຈີໂຮຮອ້ງ ສນັ່ນເມືອງ.
ຄຶດວ່າ ຫີນແຜ່ນລ້ານ, ສີລາ ກອ່ນໃຫ່ຽ ດູນັ້ນ, ປູນປຽບ ເອົາສະໂນ, ຕິດ ຊົ່ງຊາ ກໍ່ມາໄດ້,

ທັງຫຼາຽ ເພີ່ນຫາກ ລືຊາແທ້, ແຫ່ຊາງ ທາງເທັດ ສະເພົາພູ້ນ,

ດຽວນີ້ມາ ເລົ່າຕົກ ບາດຊາ, ຖືດ້າມ ຄ່າແພ.

ສັງກາດໄດ້ ທູກຮ້ຽ, ຊໍ້າຕື່ມ ຫຼາຽຕົວ ແມ່ເຮີ້ຽ, ຂອງສະເພົາ ຕົກ ຂາດທີ່ນ ຮາມຮ້າງ.
ຄັນວ່າ ໄຂລະຫັດໃຫ້, ກໍ່ເຫັນ ຄວາມຈິບແຈບ, ມາບໍ່ໄດ່ ກ້າວ ເວົ້າຄໍານີ້, ເມືອຫນ້າ ກໍ່ຈິ່ງຟັງ.
ເມື່ອຈີ່ ໄຂລະຫັດແຄ້ວງ, ຈິພວນຂີນ ຄັດອ່າວ ຫມາກເຂື່ອຕີ, ພີ່ວ່າ ມີຂີງແຄງ,ຈີ່ຄ່ຽ ໂລມທຽມໄວ້.
ເມື່ອຈີ່ ໄຂລະຫັດ ມ້າ, ກໍທຽມກຽງ ຫຼ້າອ່ອນ ແມ່ເຮີ້ຽ,ເມື່ອຈີ່ ໄຂຕໍ່ ຊ້າງ, ກໍ່ພວມຫ້າງ ເຄື່ອງຄໍາ.
ແມວຫາກ ນອນຫມາວໄຂ້, ປູປາ ມາບໍ່ຄຽດ ຕາຽລື,ໄກ່ ຫາກແຄ້ນ ແກບກອ້ງ, ຊາວຮູ້ງ ກໍ່ເລົ່າຫົວ.
ເມື່ອຈັກ ໄຂແຕ່ເຄົ້າ, ຢ້ານເຈົ້າ ຈີອອກ ເງົາເມີກ ແມ່ເຮີ້ຽ, ກົວຈັກເປັນ ຄະຍືສັບ ລວດ ບໍ່ມີ ຢາແກ້.
ພີ່ວ່າ ຫມໍຢາຫ້າມ, ຈາມໄອ ກໍ່ອົດຢູ່ ເປັນລື, ອັນວ່າແມ່ນ ຫມາກໄມ້ ຄ້າງ, ແສນ ຈີກັ້ນ ກໍ່ບໍ່ຟັງ.
ຟັງເຍີ ປັດສີບສ້ຽ, ບົວຽະພາ ວັນອອກ ກໍ່ຟັງເຍີ, ທັງພູ້ນພີ້ ສອງກ້ໍ, ກໍ່ ຫາກເຄືອງ.
ທັງ ທະຂິນກ້ໍາ ລາສະສີ, ເບື້ອທ່າວ ກໍ່ດາຽແລ້ວ, ອູດອນກ້ໍາ ກູນສາໂລ, ຊ້າງຢູ່ ກໍ່ດາຽແລ້ວ .
ອັນວ່າ ພາຽຍັ່ບກ້ໍາ, ໂຄ່ຈອນ ຫມູຢູ່ ກໍ່ດາຽແລ້ວ, ທັງພູ້ນພີ້ ສອງກ້ໍາ ກໍ່ຫາກ ເຄືອງ.
ອັນວ່າ ອີສານກ້ໍາ, ງົວທອງ ທຽວທອງ ກໍ່ດາຽແລ້ວ,ອັນວ່າ ເສືອໂຄ່ງເຄົ້າ,ໄພຽກວ່າງ ກໍຫາກເຄືອງ.
ແມ່ນວ່າ ອີສານກ້ໍາ, ທໍລະນີ ພາຽລູ່ມກໍ່ດີ, ເຟືອນຟັງພື້ນ ຄວງຟ້າ ຟາກສວັນ, ຍັງຢາກ ຕັດກິ່ງກ້ານ,

ຮ່ານງ່າ ຄູງກົກ ສນຽນັ້ນ, ຫາກບໍ່ໄດ ດວງແກ້ວ, ພີບໍ່ຍອມ ວາງຽແລ້ວ.

ລໍາໄດ້ ເປັນສະງວາ, ຟັນເສ້ຽ ກໍ່ຟັນ ເປົ່າ, ຄັນບໍ່ເປັນ ແກ່ນແທ້, ກໍ່ຟັນ ຖີມ ຖາກເຖືອ.
ຍັງຢາກຖາມ ແຕ່ເຄົ້າ, ຄົນປ່ວຽ ເປັນນັກ ເພີນພູ້ນ, ເຊີນເຈົ້າ ທົງພະເນດ, ເປືອງມາພີ້ ແມ່ຈີຖາມ.
ຍາມເມື່ອ ຫມາວຖືໄຂ້, ວັນໃດ ໃຫ້ເຈົ້າ ບອກມາທອ້ນ, ແມ່ຈີ ຕ້ານໄຕ້ຖ້ຽ, ຖາມເຈົ້າ ສູອັນ.
ເອົາອາທິດ ຈັນຄານ, ເປັນເຄື່ອນ ເຮົາທອ້ນ, ພຸດປະຫັດ ຍັງຢູ້ຫນ້າ, ຢ່າເວົ້າ ເພັດເຊີງ.

ສຸກບໍ່ມີ  ຫອ່ນຮອ້ນ, ໂພຽໄພຽ ຈັກສິງ, ເສົາ ຢອ່ງນາ້ວ, ເອົາເກື້ອ ເກືອກພົງ.
ຈັນ ບໍ່ໄດ້ ຈໍາຂວັນໄຂ້, ອັງຄານ ຫາກພາ, ປ່ວຽແມ່ ຄູນເຮີຽ, ອາທິດ ຊີບອກໃຫ້, ຈັນ ຈິ່ງຮູ້ ເມື່ອຄືງ.
ເສົາ ຫາກເປັນ ໃຈຫາ້ວ, ອັງຄານ ຈິ່ງພາດວ່ນ ແມ່ຄູນເຮີຽ, ລາຫູ ໄດກ້ອ່ມກູມ, ພູະຈັນ ເສົ້າມືດມົວ.
ຂວັນພີ່ ໄປເຜືອຝັ້ນ ປັດສິມ ພູ້ນ, ບົວລະພາ ວັນອອກ ເຫີງແລ້ວ, ມີແຕ່ ຂວັນ ປາກເວົ້າ,
ໂລມໄວ້ ກໍ່ຈິ່ງຍັງ.
ອັນນຶ່ງ ຂວັນສົບ ເມືອຢູ່ຜ້ົາ, ຂວັນຕາ ເມືອຢູ່ລໍາ ແຍງແລ້ວ, ຂວັນປາກ ເຈັດສິບສາມ ຫຽ່ວນ້າວ,
ເຫມືອໄຕ້ ທ່າເຫັງ.
ດຽວນີ້ຍັງ ຂວັນຫນ້າ, ພາຕົ້ນ ຕູ້ມຢູ່, ເຫຼືອ ກວ່ານັ້ນ ໄປຫຽ່ວຄ້າງ, ເຫມືອໄຕ້ ກໍ່ບໍ່ມາ.
ເມື່ອຈັກ ໄຂລະຫັດ ເວົ້າ, ດອມພູະຈັນ ກໍ່ແຄ້ນ ຄັ່ງຄານັ້ນ, ອາທິດ ຍົກຄືວ ເປື້ອງຕາໃຫ້,
ກໍ່ຢາຟ້າວ ຟັ່ງໄຂ.
ພຸດ ຫາກອັດ ດຶກໄວ້, ກໍ່ເອົາໃຈ ເວວາດ, ປະຫັດ ມາຊ່ຽນ້າວ, ກົມກຽ້ວ ກ່ອນເສນ.
ອັນວ່າ ສຸກເສົ້າ ນີ້, ລຽນວັນ ກໍ່ມາ ພາກ ກັນນໍ່, ເລີຽເລົ່າມາ ຫຼີກເວັ້ນ, ແສນຊໍ້າ ຊົ່ວໄກ.
ນໍ້າຕານເຮີຽ ສັ່ງມາ ຍົມຂືວສົ້ມ, ຈາງຄັມ ຣິມຝາດ ເສັຽນໍ ແມ່ເຮີຽ, ແຈະ ແຕ່ປາຽ ຈີ່ມລີ້ນ,
ຈາ່ງຈີ້ວ ດັ່ງຫມາກນາວ.
ເຂີນແມ່ ຫົງພູະໄທຍືອນ, ຊີມສະງາວ ແຕ່ພໍຄ່າວ ກໍ່ດີຫອ້ນ, ຍັງຢາກ ໄຊ້ຖິ່ວ ຄວ້າງ,
ຖາມຫມໍ້ ຄ່າວດີ.
ຄຶດວ່າ ຕັ້ງຕໍ ອຽ້, ອຽ້ ກໍ່ເລົາ ມາຍົມ ເພືອນນໍ, ແຫນງ ສູ່ເອົາ ເຂົາຮໍ, ປິ່ນຫອນ ໂຮຽຊໍ້າ.
ເລົາວ່າ ກຽ້ ກໍ່ບໍ່ເປັນ ກ້ຽແຫ້, ເຫມືອນລາບ ສະງາວ, ພິກແຈ່ວນັ້ນ ມາຄາ່ວ, ເອົາເຂົາຮໍ ເຫມືອດ
ຄົນຕາງເພັ້ຽ, ຄັນວ່າ ພູະຈັນ ຂື້ນສົມແສງ, ກໍ່ຮູ້ເມື່ອ ແມ່ເຮີຽ, ເຈົ້າບໍ່ປອ້ນ ນໍ້າອ້ຽ,
ຫອມໄວ້ ຈີ່ເລົາຍົມ.
ທັງຫຼາຽ ຫຼ້າງ ແກງປາ, ຍອດສະເດື້ອ ຈີຄີລີ, ສັງຮ່າວ ມາ ກູມຊົມ, ເຂົາຮໍ່ ໄຕ້ຮາວ ນໍາຮົ້ວ.
ພູດີ ສັບ ພູຮາ້ຽ, ພາຄາວ ຂົວເພືອນ ເສັຽນໍ, ເຈົ້າບໍ່ຍັບ ຄຽ່ນຄ້າງ, ຈວງໄວ້ ຈີເຄືອບຄາວ.
ເມື່ອຈີ ໄຂລະຫັດ ຫມໍ້, ຈີເຄືອງ ໃຫນໍ້າ, ຈີເປີດ ໄປແລ້ວ, ເມື່ອ ຈີເວົ້າ ຕໍ່ຊາ້,
ບູງຫ້ຽ ແຂວນໄວ້ ກໍ່ຫາກເຄືອງ.
ເມື່ອຈັກ ໄຂລະຫັດ ຊອ່ນ, ຈີເຄືອງ ແຫຊ້າ ທີ່ເຮົາຕີ, ແມ່ນວ່າ ບູງຊ້າ ຫ້ຽ, ຝູງນັ້ນ ກໍ່ຫາກ ເຄືອງ.
ບໍ່ໄດ້ ເຄືອງ ແຕ່ອີວ, ທັງກີ່ ຫຼາຟີມ ແມ່ເຮີຽ, ແມ່ນວ່າ ຂອນກີ້ງຂວາງ, ກາງບ້ານ ກໍ່ຫາກ ເຄືອງ.
ມີເຮືອ ແລ້ວບໍ່ມີ ພາຽ ກວັກ ວາດເວນໍ, ມີພາຽ ບໍ່ມີ ບອນໄວ້, ເຮືອ ກໍ່ຄ້າງ ກວັ່ງຄອນ.

ອາຫະວາ ດັ້ງ ສົນເທ, ຄຽຄັ່ງ ທວງເດ, ເມື່ອບໍ່ຈັບ ຈອ່ງນ້າວ ແຜນໄວ້, ກໍ່ ກົວຢ້ານ ຈິ ຫຼູດມື.
ຄັນວ່າ ຈັບ ແຂວນຫ້ຽ, ວາງຊາວ ກໍ່ເສັຽ ຫນວດເສັຽຕີ, ນ້ຳປູ້ນ ປ້ານ ເຮືອຄ້າ ບໍ່ ແກ່ວນຄອນ.
ຄຶດວ່າ ກ້ຽ ໃຈຕັ້ງຕໍ່ ຫມ້ຽງ, ວຽງຈັນ ກໍ່ມາ ເພື່ອນຮື່ນບໍ, ຄຶດຈັກ ຕັ້ງຕໍ່ ຂີ່ງ, ປູກເຮື້ອ ແຣໄວ້,
ກໍ່ມີ ດວ້ງ ປູ່ນໃນ.

ແຮງຄຶດ ແຮງຊ້ຳ ຫ້ຽງ, ນອນຫຼາຽ ກໍ່ຊ້ຳ ເມື່ອຽ ມະໂນແລ້ວ, ໄມ້ຫາກ ເຫຼືອແລ້ວ,
ໃຜ ຈີຊວ້ານ ຊ່ຽຊູ.

ໃຜບໍ່ໄດ້ ຈຳ ອົກເຈົ້າ, ນອນດິນ ຕາກຫມອກ, ເຈົ້າຫາກ ເປັນ ຜູ້ຮູ້, ໂຕນນ້ຳ ຈິ່ມຫນາວ.
ເມື່ອຈີ ໄຂລະຫັດ ແຄ້ວງ, ຈີເຄືອງ ເຂືອຕັ້ນ ປ່ວງວິນຕີ, ບໍ່ໄດ້ເຄືອງ ແຕ່ ຫມາກແຄ້ວງ,
ແກງຊວ້າ ກໍ່ຫາກ ເຄືອງ.

ໃຜຈັກ ໄຂຄວາມເວົ້າ, ເອົາຫມູ ໄປລໍ່ ແມວນັ້ນ, ໃຜບໍ່ຫ່ອນ ເອົາ ລູກແບ້, ໄປປ້ອນ ປາກເສືອ.
ເມືອຈັກ ໄຂລະຫັດ ນ້ຳ, ກໍ່ຈຽມໃຈ ພຽານາກ ຈີຟູນຕີ, ເຈົ້າຈີ ຕີ ຂຽດຖີມ, ງູ ຈີຮ້ອງ ຮ່ອມໃດ້.
ເມືອຈີ ໄຂລະຫັດ ມ້າ, ອາສະໄນ ກໍ່ຄາ ເຄື່ອງຄຳນັ້ນ, ວ່າຈັກ ໄຂ ຕໍ່ຊ້າງ, ຈີຫົວ ຍ້ອນ ບ່ອນໄດ້.
ໄຂ້ ຈັກໄຂລະຫັດ ດັ້ງ, ກໍ່ຊາ ບູງ ຊ້າຫ່າງ ຈີເປັນລີ, ເມືອຈີໄຂ ປາກເວົ້າ ຕໍ່ຫມໍ້, ຟືນ ກໍ່ດິນ ຈາກຄີ.
ແຄ້ນຄັ່ງ ອາຫະວາ, ຜ້າກາສາ ທາງເທັດ ສະເພົານັ້ນ, ລົມ ຫາກມາ ຫອບອູ້ມ, ຖູຽນ້ຳ ເກືອກຕົມ.
ເສັຽດາຽ ຈາວງຈັນ ຄູ້ຮົມ, ຄວັນກົ້ວ ຝູ່ນເສັຽນໍ, ອັນວ່າ ຄ້ອນ ຕອກຂ້ວາງ, ກາງບານ ຈີ ຕ່າວຫອມ.
ຍາມເມື່ອ ເຮືອນ ຫນາຫມັ້ນ, ວອນຫາ ຊ້າງ ໄຕ້, ຍາມຍັງ ໃຫມ່ນັ້ນ, ວອນນ້ຳ ຮຽກຝົນ.
ຄັນວ່າ ເຄຫັງ ຊ້າຽ, ໄປມາ ກໍ່ຍືນຍາກ, ບາດວ່າ ນ້ຳ ຖ້ວມແລ້ວ, ເຊ ລົມ ທ່າວລົງ.
ຍາມເມືອ ຍັງ ລຳຄົ້ວ, ໃບຫນາ ແຮງຮອດ, ໄມ້ ແກ່ຊ້າຽ ໃບຊ້ອນ ຫຼົ່ນ ເຫຼືອງ.
ແປນ ກິ່ງກ້ານ, ກຸດຂາດ ເລີຽຫັກ, ເຊຊວນ ທັ່ບ, ທ່າວລົງ ທະລາຽ ມ້າງ.
ດີທໍ່ ເອົາ ແພງແກ້ວ, ສາມອັນ ຢ່າໄດ້ ພາກຕົວເທີນ, ຍໍໃສ່ ເກົ້າ, ກຳໄວ້ ຢ່າວາງ.
ຄັນບໍ່ ໂສດາແກ້ວ, ວາງເສັຽ ໃຜຈີ່ວາ ເປັນນັ້ນ, ຢ້ານແຕ່ ນ້ຳຫມອກ ກົ້ວ, ຮຳຫນ້າ ມືດມົວ.
ວ່າຈັກ ໄຂລະຫັດ ແຮ້ງ, ບິນບົນ ອາກາດ ດູນັ້ນ, ເມືອຈັກ ໄຂຕໍ່ ນ້ຳ, ກໍ່ ກົວຢ້ານ ເງືອກງູ.
ວ່າຈັກໄຂຕໍ່ ເສືອເຫຼືອງ, ຫຼື ງົວຄວາຽ ກໍ່ເຕັມຄອກ ເຮົານັ້ນ,ເມື່ອຈີໄຂຕໍ່ ເບື່ອ,ກໍ່ເຟື່ອນຟືນ ທົ່ວໄພຽ.
ວ່າຈັກໄຂຕໍ່ ຫມູຊີ່ງຫຼື, ກໍ່ກົວ ແມວ ຈີຕັ້ນໃສ່, ໄກ່ຈີໄຂ ຫນ້ວງ, ຫມູ ຈີຕັ້ນ ທົ່ວເຮືອນ.
ເມືອຈັກໄຂຕໍ່ ຫົງຄຳຫຼື, ກໍ່ມົວລຽ ນ້ຳໃຫ່ຽ, ໄກ່ຈັກໄຂ ຄ່າວ, ເຫັນ ອົ້ມ ກໍ່ໄຂ້ການ.
ແມວເຮີຽ ສັງບໍ່ໄປ ຄຽຢຽມ, ຫມູຊີ່ງ ງູກປາກດູນັ້ນ, ບໍ່ຊາ ຈີໄຂ້ ລູກແບ້, ຖາມເວົ້າ ຄ່າວເສືອ ນັ້ນຕີ.
ໄກ່ເຮີຽ ສັງບໍ່ ແລລີງຢ້ຽມ, ຈີມົວເມົາ ປ້ຽດ່າ ກາ ນັ້ນ, ຮູງ ຈີມາ ເຂັ້ຽຂ້າງ, ກາໃບ້ ກໍ່ບໍ່ເຫັນ.

ກົບຂຽດ ມົວເມົາ ຫຼິ້ນ, ຊົມຝົນ ເຕັ້ນຕ່ວງ ປູະໂຫນໍ, ມາບໍ່ແລ ລໍ່າຢຽ້ມ, ຈຽມຂ້າງ ເບິ່ງງຽ.
ຕາໃສ ທຽວທາງ ກວ້າງ, ກາງວັນ ກໍ່ບຸປ່າ ໄປນັ້ນ, ຕາບອດ ຍິກຄີ້ວ, ປາຽຕາ ຖີມ ໄສ່ເລີງ.
ສັງບໍ່ ຫຼຽວ ເມື່ອຟ້າ, ຂົວນົວ ບົດເມັກ ແມ່ເຣີ່ຽ, ຫູຫນວກ ນອນເຜົ້າ ຊ້າງ, ກໍ່ຍັງຮູ້ ຕູ່ນຖືວ.
ຫມູຫມາ ຍັງຮູ້ຫ້ວງ, ບິນແຊວ ດະປາກ, ເສືອໂຄ່ງ ອ້າວໄພຽກວ້າງ, ດັງກອ້ງ ທົ່ວເມືອງ.
ກາລະດູ ເມື່ອຫນ້າ, ກາດໍາ ຈີຂາວຜ້ອນ ໄປແລ້ວ, ຫມາຈີກາຈອກ ໄດ້ ເກີບແກ້ວ,

ອັນປະເສີດ ຂອງຈັກ, ທໍາ ຕົນຕົວ ໃຫ່ຽສູງ ເສີມ ຊ້າງ.

ຄັນວ່າ ສາດສນາ ສ້ວຽ, ປີເດືອນ ກໍ່ຄະຄ່ຽນ ໄປແລ້ວ, ເຂົ້າ ແລນໍ້າ ປາ ເຕັ້ນ ຄ່ຽນວັງ.
ຍູງຍາງ ຝູງໃຫ່ຽດິ້ວ, ລົມຕໍ້ ທະລາຽທັບ, ພາຽສານ ມີງາງາມ, ຄອດຖຽ ຫາງຫຽ້ນ.
ຊອມດູ ນໍ້າ ຊອມດູ ນາ ເຂົ້າໃຫ່ມ, ຊອມດູ ໄກ່ ຕື່ນທ້ວງ, ສວາຽເຊົ້າ ເມື່ອແລງ.
ໄກ ຫາກກາຽ ລະດູແລ້ວ, ລົງຄອງ ຖ້າເຫຼືອ, ລໍ້າຕູດຕັ້ງ ເຖິງເທົ້າ ທຽງຄືນ.
ຄັນວ່າ ຕົບ ປີກແລ້ວ, ຂູ້ມມືດ ເລີ້ຽຂັນ, ຫມູຫມາ ນອນ, ມີ່ນັນ ເຝືອນຟືນ.
ຫມູຫມາ ເອີ້ນ ເຕີນຄວາຽ ຫາງຫາບ, ເປັດ ໄກ່ ຂັນ ສົ່ງຊ້ໍາ, ມັນຮ້າງ ສັ່ງຄອນ.
ຄັນວ່າ ໄຂ ຄ່າວແຄ້ວງ, ກໍ່ເຫັນ ທີ່ຄວາມຂົມ ຢູ່ແລ້ວ, ຄັນວ່າ ເນົາສັງຂານ,ຈົ່ງຄ່ຽ ຟັງເອົາທອ້ນ.
ອັດສະຈັນ ໃຈຜ້າ, ເອົາໄຟ ເປັນ ພໍ່ສ່ຽວ ຈີຄີລີ, ເມນ ຫາກມາ ເປີດຜ້າ, ຄິງ ຈີ່ຮອ້ນ ຮ່ອມໄດ.
ເຫົາ ສະງວນເວັ້ນ, ຊັງ ຜົມ ຂີວຫມວກ, ແຂນ ເປີດ ເສືອ, ສອງຊັ້ນ ຄອບເມນ.
ຫມອນ ແຣລົ້ວ, ຊັງຫົວ ຂີວເຣືອດ, ຄວາຽ ເປີດຫຽ້າ, ຫຽາມຣິ້ນ ສຽດ ຍູງ.
ນາວາ ຮ້າງຮາມ ເຫມັນຫມາງ ທ່າ, ຫມາງ ຄອບນໍ້າ ຖູ່ມຖວມ, ຟອງກົ້ວ ທົ່ວວັງ.
ຈີກາຈອກ ມາເປີດມູ້ງ, ລົງແກບ ຫົວມອງ, ແມວ ຢ່ອງເຂົ້າ, ຫຼຽວເຫັນ ຂູດແຍກ,ຄາບ ຫມັ້ນແລ້ວ,

ມັນເຕັ້ນ ສອດຫນີ.

ເລີ້ຽເລົ່າວາງ ຮວງເຜີງ, ບົບໄປ ເຕັ້ນຕວ້ງ, ໄປພົບ ເສືອໂຄ່ງກ້າ, ຍັງ ນັ້ງເຜົ້າ ຫໍລະດີ.
ກໍ່ບໍ່ ມີຫວັງ ໄດ້ໄປມາ, ວັດເວົ່າ ເສັ້ຽນັ້ນ, ກໍ່ຈີ່ງ ຄືນຄອບ ເຜີງ, ກໍ່ເຫັນ ຮ້າງ ເປົ່າເສັ້ຽ.
ວ່າຢາກ ກິນ ກໍ່ກິນ ບໍ່ໄດ້, ຮັງ ສູງສຸດ ພໍ່ຕານັ້ນ, ທໍລອນ ແຫງນ, ເບິ່ງລາ ຣົມຮອ້ນ,ຮວ່ານເຣ ຊໍ້າຕື່ມ,

ສົນເຫດັ້ງ ອາທະວາ, ຄ້ຽຄັ່ງ ທວງເດ, ບໍ່ຊາວາ ຈີໂຕນສູ່ພື້ນ,ໃນນໍ້າ ກໍ່ໄສ່ການ.

ເອົາຍາມ ມາເປັນມື້, ປີເດືອນ ກໍ່ະຄ່ຽນ ໄປແລ້ວ, ຝູງຫມູ່ ຊາວແກບກອ້ງ,ຈີໂງແງ້ນ ກົ່ງສະຫາວ.
ຄືດວ່າ ຂູມພູເຂັ້ມ, ປູະສົງ ເອົາມາຂອດ ແມ່ເຣີ່ຽ, ດຽວນີ້ ສູນ ບິ່ມເຂົ້າ, ຊຶນຄວ້າງ ເກືອກທອງ.
ເທື່ອນີ້ ຂູມພູ ຖຽ, ຕົກສີ້ ຄໍາຜູຍ, ຊໍາພັດ ຜ່ອນໄປແລ້ວ, ເອົາໄປ ຂາຽຈ່າຽຊື້, ຈີທີໄດ້ ບາດຕໍສຽື້ງ.
ບັດນີ້ ທອງແດງ ຂື້ນ, ກາຽຜູຽ ແສນຊວ່ນ ເສັຽແລ້ວ, ຂູມພູ ຕົກບາດຊ້າ, ຊຶນຄວ້າງ ຄ່າແພງ.

ຄຶດວ່າ ມະນີ ໂຊເຂັມ, ກໍ່ຈິ່ງຖື ເປັງແປດ ແມ່ເຮີຍ, ດຽວນີ້ ຊູມພູ ຕົກບາດຊາ, ຫີນແກ້ວ ຄ່າແພງ.
ຊູມພູ  ຖຽຖົກໄວ້, ຄົນຄວາ ກົ້ວຝຸ່ນ ເສັຽແລ້ວ, ຍອ້ມ ບໍ່ຂື້ນ ຊາວຄ້າ ກໍ່ບໍ່ຫູມ.
ພີ ຈີຣານ ຕາມນ້ຳ, ຄູງເຖີງ ບາດຕັ້ງທອງ ແມ່ເຮີຍ, ລ້ຳກວ່ານັ້ນ ຊາວຄ້າ ເພີ່ມບໍ່ຖື ແມ່ເຮີຍ.
ກໍ່ຈິ່ງ ຕັດຕາມ ນ້ຳ, ຄຳດີ ແລະ ອອ່ນແກ່, ຜີວ່າ ຄຳ ເນື້ອຫ້າ, ຄົງຈີໄດ້ ບາດຊາວ ບໍ່ຢ່າແລ້ວ.
ຄັນວ່າ ສາດສນາ ສວ້ຽ, ວັນຍາມ ກໍ່ຄະຄ່ຽນ ໄປນັ້ນ, ຈິດ ບໍ່ຕັ້ງ ຢູ່ຫມັ້ນ, ໃຈ ຄວ້າງ ວັ່ງເວ.
ແມ່ນວ່າ ຝູງລູກເຕົ້າ, ນ້ຽພໍ່ ສະຫມານຫຼວງ ກໍ່ດີ, ເຂົາຈັກເອົາ ໄປຍີຍຳ ເສັຽເສີມແປ້ງ.
ອັນວ່າ ຕົນຕົວເຈົ້າ, ຄູນຄາມ ມີມາກ, ຝູງ ຊູນຄ້າ ໄປມາ ເວົ້າຮອດ, ເລີ້ຽ ຈອດຍັ້ງ ກົ້ມກຼາບ ວັນທາ,
ຕາສອງກ້ຳ ແລດູ ເລີດເບິ່ງ, ບໍ່ເປີດໄດ້ ລ້ຳເລີດ ເຮືອງໄກ.
ຝູງຫມູ ພາລາໃບ້, ຣາວີ ຫຼຽບຍາດ ໄປແລ້ວ, ເລີ້ຽ ແປ່ນ້າງ ສນາມກວ້າງ ມູນວາຽ.
ຄຳແມ່ ໄຂລະຫັດ, ຊ້າງສາມຫົວ ຂາວເຜືອກ ນັ້ນມາ, ຈຳຈີ່ໄວ້ ເມືອຫນ້າ, ຮ່ຳເພີງ ແມ່ເຮີຍ.
ຖາມຄ່າວ ຝູງເຮືອນຊ້າຽ, ຫວາຽກູມ ໄມ້ດອກ ອີດູເດ, ຮູ້ວ່າ ໄມ້ ອອ່ນແລ້ວ, ຈີຫາມໄວ້ ບອ່ນໄດ.
ຍາມເມື່ອ ເຮືອນແມ່ ຍັງຫນາຫມັ້ນ, ຈີລາ ໃຈ ໄວ້ຮ່າງ ເສັຽນໍ, ບາດວ່າ ເຮືອນເຈົ້າ ຖຽເກົ່າແລ້ວ,
ຊວນຊ້າຽ ຈີງຈີພາ.
ຫາມ ບໍ່ແຍງດູ ໄມ້, ພາລົວ ຂອນດອກ ບໍ່ຄືຕີ, ອັນວ່າ ໄມ້ ໃຫ່ຽຄົ້ວ, ສັງເຈົ້າ ບໍ່ຫາມ ແມ່ເຮີຍ.
ໃຜຢາກ ຫຽວທາງ ເວີ້ງ, ກໍ່ມາ ເຊົາສານ ຈອດເຮົາພີ້, ແມ່ຫາກ ໄດ້ຫ້າງໄວ້, ພັນຫ້ອງ ຈີ່ງຄ່ຽເຊົາ.
ແມ້ນວ່າ ເຈົ້າຢາກ ເມືອເຖີງຫ້ອງ,ຈອມດຽ ຄິດສະກູດ ກໍ່ດີ,ຮຽມຈັກຊີ້ບອກໃຫ້ ທາງເຄົ້າ ຈີງຄ່ຽໄປ.
ຫົນທາງ ມີຫຼາຽເສັນ, ຕາມໃຈ ໃຜຈີເລືອກ ໄຕ້ໄປທອ້ນ,ຄັນວ່າ ມັກເສັນເວີ້ງ, ທາງລຽ້ວ ກໍ່ຫາກຍັງ.
ແມ້ນວ່າ ເຈົ້າ ຈີລົງ ລຽຫຼົ້ນ, ສມຸດຫຼວງ ນ້ຳໃຫ່ຽ ກໍ່ດີທອ້ນ, ແມ່ບໍ່ ໄດ້ຫ້າມ, ຂີນເຈົ້າ ທໍ່ໄຍ.
ຄັນວ່າ ເຈົ້າ  ຢາກໄປ ຫົນຫ້ອງ, ຈອມດຽ ກໍ່ຜີຍາກ, ບໍ່ໄດ້ ສູດສອດ ເສື້ອ, ສາມຊັ້ນ ກໍ່ຄວນ.
ອັນວ່າ ຫົນທາງ ມີຫຼາຽເສັນ, ອັນວ່າ ຫົນທາງ ເມືອຫົນຫ້ອງ, ທັງສາມ ບໍ່ແມ່ນທາງ,
ເຈົ້າໄຕ້ມານັ້ນ,ອັນວ່າ ທາງເສັ້ນນີ້, ດູເວີງ ຊົວໄກ ເຈົ້າເຮີຍ.
ສາລາ ເກົ້າພັນ ຫ້ອງ, ຂອງມີ ທຸກສີ່ງ, ແມ່ນ ຢາກຊົມ ດອກໄມ້, ດວ້ງຄູ່ ກໍ່ຫາກມີ.
ອັນວ່າ ກາສາ ຜ້າ, ຂອງດີ ທັງເທັດ, ບໍ່ໄດ້ ໄຮ້ ດອກໄມ້, ຕາມເຈົ້າ ຈີ ເລືອກຊົມ.
ທໍ່ວ່າ ຫົນທາງ ໃນ ເກົ້າເສັ້ນ, ເປັນທາງ ຫຽວທ່ອງ, ຫຽມແທບ ຂ້າງ, ເຮົາໄວ້ ຊູຄົນ.
ທາງຝູງນີ້  ເສືອສາງ ມີມາກ, ໄມ້ໄຄ່ວ ຂວ້າງ, ຕັນຕ້ອນ ຊູ້ທາງ.
ອັນວ່າ ຄູງຄາ ນ້ຳ, ສມຸດຫຼວງ ຟອງຟາດ, ສັດຊີ່ງ ເບືອ, ລົງຫັ້ນ ກູ່ມກ້ອງ.
ນ້ຳໃຫ່ຽກວ້າງ ຍາວໂຍດ ອະນັນຕັງ, ມີ ຫມູຫມາ ໃຫ່ຽສູງ ເສີມຊ້າງ, ມີທັງ ຍູງຍາງ ລົ້ນ,

ຕົ້ນວັງ ຂິນໄຂ່ວ, ໄມ້ໃຫ່ຽນ້ຽ ກອງໄວ້ ໄຂ່ວຂິນ.

ມີທັງ ລຳໄມ້ງີ້ວ, ເຄືອຫວາຽ ເດັ່ຽລະດາດ, ມີທັງ ກາແລະແຮ້ງ, ເຫຼືອລົ້ນ ອະເນັກນອງ.

ມີທັງ ຍູງແລະຮິ້ນ, ຕົວໃຫ່ຽ ເສີມກາ, ມີ ຫມູຫມາ ລຽຍນຳ ແຄມນ້ຳ.

ອັນວ່າ ສັດສີງ ພາລາໃບ້, ໃຈ ຫນ້າ ສາໂຫດ, ຕາ ບອດໃບ້, ມີຮູ້ ຮ່ອມກຳ.

ອັນວ່າ ຄັນເປັນ ເຈົ້າບ້ານ, ສມຸດຫຼວງ ມີມາກ, ເຂົານັ້ນ ຖື ຫອກງ້າວ, ຟັນຂ້າ ຍ່ຳຍີ.

ມີທັງ ຫມາ ໄຕ້ຕົ້ນ, ໂຕນຄາບ ຄະໂຍງ ຄົບ, ມີທັງ ກາ ສົບເຫຼັກ ສົບທອງ, ຕອດກິນ ທະລາຽ ມ້າງ.

ສົມທີ່ຄຶດ ພາຽດາບ, ຕັ້ງຂຶ້ນ ມ້າມະນີກາບ ຜັນລົງ, ນໍລະສານ ຍໍມືນົບ, ຄ່ຽຟັງ ຄຳຕ້ານ.

ຟັງຍິນສຽງ ຫມູຮ້ອງ, ບິນແຊວ ຈຸກປາກ ພູ້ນເນ, ກົບຂຽດ ສັ່ນສີ່ງເວົ້າ, ຄົນບ້າ ກໍ່ເລົາ ຫາຽ.

ຄັນວ່າ ຊ້າງຫຼວງ ພົ້ນ, ດຳແດງ ກໍ່ມຸດມອດ ໄປແລ້ວ, ທັງເທົ່າຫ້ອມ ຊອນເຮື້ອ ກໍ່ເລົາຫາຽ.

ຄັນວ່າ ຊາງຫຼວງ ພົ້ນ, ດຳແດງ ກໍ່ມຸດມອດ ໄປແລ້ວ, ດັ່ງ ເທົ່າຫ້ອມ ຊອນເຮື້ອ ກໍ່ເລົາຫາຽ.

ລືແຕ່ ທຳທານຮ້າຽ, ຮານຫຼວງ ສັ່ນໄຂ່ວ, ຄັນວ່າ ປັດ ຫມູ່ນີ້, ຫນີແລ້ວ ຈີ່ຫາຽ.

ຄັນວ່າ ເງົາ ພົ້ນແລ້ວ, ແກດແຮດ ກໍ່ເລີຽມຸດ, ກໍ່ບໍ່ມີ ສັງສັ່ນ, ອອກມາ ແກມໄດ້.

ຍາມເມື່ອ ຫນາວຖືໄຂ, ອັງຄານ ຫາກ ພາດ່ວນ, ຮູ້ຄ່າວ່ວາ ຫມໍ ຫມາກໄມ້ ມາແລ້ວ,

ຄຳໄຂ້ ກໍ່ ເລົ່າຫາຽ.

ປີໃດ ສັງຂານຂຶ້ນ, ວັນອັງຄານ ຍາມທ່ຽງ, ເກັ່ງທໍ່ ນ້ຳຖ້ວມບານ, ເດືອນຫ້າ ລວາດເມືອງ.

ເມື່ອຈາກໄຂ ມະຫັດ ບົ້ງ, ກໍ່ ເປັນເຄືອ ຍູ່ງຍ່າງ, ເມື່ອຈີ ເວົ້າຕໍ່ ກ່ວຽ, ກໍ່ຄາ ຂວັນ ຄາດເຄືອ.

ອັນວ່າ ຫມູຫມາ ຮ້ອງ, ສຽງເສືອ ກໍ່ຢ່າ ຢູ່ສັນ, ໄດ້ເຈົ້າ ຈີ ມົ້ມຕົວແຫ້ ຄ່ຽໄປ.

ເມື່ອຈີ ໄຂລະຫັດ ຝ້າຽ, ຈີເຄືອງ ໄນ ເຂັນແກ່ວງ ເປັ່ຽຕີ, ເມື່ອຈີ ເວົ້າຕໍ່ ຊ້າ, ບູງຫ້ຽ ກໍ່ຫາກເຄືອງ.

ຄັນວ່າ ຫມີເຫມືອຽ ເນື້ອ, ກວາງຟານ ປົບຜ່າ, ມາເຂົ້າ ບ້ານ ຢ່າຊ້າ ສຽບແທງ.

ຄັນວ່າ ໃຜ ດົນຂ້າ, ຄົວເຮືອນ ຈີມຸດມອດ, ເກັ່ງທໍ່ ເສັ່ຽ ລູກເຕົ້າ, ຂອງຄ້າ ມູນວາຽ.

ເມື່ອຈີ ໄຂລະຫັດ ຜ້າ, ກໍ່ເຄືອງ ບູງຊ້າຕູ່ມ ເຮົາຕີ, ແຄ້ນຄັ້ງ ເຄືອງ ກີ່ອີ້ວ, ຫຼາຝາຽ ກໍ່ຫາກ ເຄືອງ.

ອັນວ່າ ຊ້າງໃຫ່ຽ ລົ້ມ, ເສັ່ຽຄອບ ເຫມືອງນາ,ອັນວ່າ ນາວາ ຮ້າງຮາມ, ແຜນຫຼາຽ ເທື່ອເລີງແລ້ວ,

ເກືອໃຫ່ຽກ້ອນ ຊຶມນ້ຳ ບໍ່ຫ່ອນເປັນ.

ຫມູຫມາ ຖືເອົາ ຄ້ອນ, ຕີ ເສືອ ສຽງສນັ່ນ, ງົວຄວາຽ ປົບປ່ວງ ຕົ້ນ, ຄົາຂາດ ເປັນຜົງ.

ເຂົາ ສອດຊ້ວານ ຫາບຕ່າງ ສົນສົນ, ແຊວແຊວສຽງ ປ່າໄພຽ ເຟືອນຟື້ນ.

ເມື່ອຈັກ ໄຂລະຫັດ ຂ້າວ, ຈີເຄືອງກອນ ທັງຄື່ ສະຍົວນັ້ນ, ເມື່ອບໍ່ເວົ້າ ກໍ່ເປັນ ບັ້ນ ບ່ອນຈີໄຂ.

ແຄ້ນຄັ່ງ ເຄືອງ ເຖິງຫ້ຽາ, ຝາ ເຂ່ນກີວ ຕອກ ສະຍົວນັ້ນ,ບໍ່ໄດ້ ເຄືອງ ແຕ່ຫ້ຽາ,

ເຊນຊອນ ກໍ່ຫາກ ເຄືອງ.

ເມື່ອຈັກ ໄຂລະຫັດ ຣິ້ນ, ຈຽມ ຍູງ ຈີລົ້ມຫ່າວ ໄປນັ້ນ, ວ່າຈັກເວົ້າ  ຕໍ່ຊ້າງ, ກໍ່ເຄືອງແຄ້ນ ຫມູ່ຊາງ.

ອັນວ່າ ເດືອນດໍານີ້, ບໍ່ຄວນຖື  ຕາງ ດາບ, ອັນ ອຸແອ່ງ ນໍ້າ ໃນຫມໍ້ ຈີເປີດ ຝາຽ.

ອັນວ່າ ລົມອ່ອນຕອ້ງ, ຢ່າວອນ ຜົນ ຫາແດດ, ບາດວ່າ ແດດແຂງ ມາເລົ່າ ຮອ້ນ,ວອນນໍ້າ ສຽດລົມ.

ຫນາວ ຈິ່ງໄດ້ວອນຫາຜ້າ,ວອນດາຽ ກໍ່ວອນເປົ່າແມ່ເຣີຽ,ຮອ້ນ ຈິ່ງຮອ້ງຮຽກເອີ້ນ,ຫານໍ້າ ກໍ່ຄໍ່າດາຽ.

ແມ່ນວ່າ ຫມາກໄມ້ ຄາ້ງ, ກໍ່ລາ້ວ ຫຼາກຫຼາຽສບັບ, ອັນວ່າ ທໍາທານແຖມ, ເຫືອດຈົ້ມ ກໍ່ຂໍາເຣື້ອ.

ອັນວ່າ ພາລາ ໃບ້, ຄົນຫນາ ສາໂຫດ, ດຽວນີ້ ຮູ້ ປີ້ນແປ້, ເພມາ້ງ ເມືອງຂວໍາ ມູ່ນວາຽ.

ຫມາຈິກຈອກ ທໍາຕົວ ນອ້ມ ເປັນ ຂົວ, ຢ່າໄດ້ ເປີບໃຈເນີ, ມັນຊ່າງ ຮູ່ ຂາຽຫນ້າ ເຈົ້າ,

ເລີງເລືອຽ ຄຽດຟູນ.

ຂາວ ກໍ່ບໍ່ ຂາວແທ້, ແດງ ສະເທີນ ມູ່ຽແກ, ເມື່ອຈັກ ຜັດຜືວ, ເຫຼືອງເຫຼືອງ ແທ້ ກໍ່ບໍ່ເປັນ.

ແລບຍິ່ງ ໃນ ຜືນຜ້າ, ກໍ່ລືຊາ ໄຫມຍອດ ມ່ານປະໂຄ ພູ້ນ, ວ່າຢາກ ທຽມແທບ ຜ້າ,

ສະໂດໄຕ  ກໍ່ເລົ່າເກີນ.

ໄຫມ ກໍ່ບໍ່ເປັນ ໄຫມແທ້, ພໍສະງາວ ບັ້ນທ່ອນ ຈີເປັນລື, ຍອ້ມແຕ່ ໃສ່ຮູງເຫຼືອມ, ເປັນບັ້ນ ກໍ່ບໍ່ງາມ.

ເມື່ອຈັກ ໄຂລະຫັດ ຄໍ້າ, ຈີເຄືອງ ຂາງຂືນ ຟາກຕົງຕີ, ຍອ້ມ ຄັ່ງຄຶດ ວ່າ ຢາກໃຫ້,

ເຂົ້າຈີ່ ມາ ປີ້ນມູ່ຽ ແກມ.

ປີກາຽ ຍັງວ່າ ເປັນ ຜືນຜ້າ, ໃສງາມ ພໍລໍ່າແຍງ ນັ້ນ, ປີນີ້ ເປັນຜ້າແພ້ວ, ນາເຣືອ ກໍ່ຂາດເຊີງ.

ຄົນ ກໍ່ບໍ່ເປັນ ຄົນແທ້, ເປັນຄົນ ຟາງ ຕາບອດ, ເຈົ້າຢ່າ ໃຫ້ຂ້ຽ ເວົ້າແພນ, ພົ້ນເພີນ ຈີເກີນ.

ຄັນວ່າ ໄຂລະຫັດ ຊ້າ, ຈີເຄືອງ ຖົງ ສາຽດາບ, ຈີກຈອກ ຖື ຫອກງາ້ວ, ຈີພຽນລ້ຽງ ຮ່ອມໄດ້.

ຫມູຫມາ ເຫມັນຫມາງ, ເຈົ້າໂງສຽງ ສະຫາວເທົ່າ, ເສັຽແຮງ ປັ້ນຫມ່ຽງເຂົ້າ ຖນອມລ້ຽງ,

ກໍ່ມາປີ້ນ ເທົ່າໂຕ.

ຄັນວ່າ ຫມາຫຼົງ ເຈົ້າ, ກໍ່ຢ່າ ຈົງໃຈ ຮໍມັນທອ້ນ, ເປັນມອດດວ້ງ ບູ່ນໄມ້, ກະຈວງແປ້ງ ມູ່ນຜົງ.

ຄັນວ່າ ພູຄໍາຂຶ້ນ, ແຝງເຂົາຮໍ ກໍ່ຮູ້ ເຟືອນຮີນບໍ, ຫມາກຈິກຈອກ ໄດ້ເຂົ້າກົ້ວ ແກມບາ້ນ,

ກໍ່ບໍ່ງາມ ແມ່ເຣີຽ.

ຄໍາແດງສີ້ວ ຄົນຄາວໄຫມ ຍອດຈີເປັນລື້, ເຈົ້າບໍ່ ກີ້ງກ່ອມ ປັ້ນ, ປັນໃຫ້ ກໍ່ບໍ່ງາມ.

ຄັນວ່າ ໄຂລະຫັດ ຝາ້ຽ, ຈີເຄືອງ ສາຽຊ້າຫຼອດ ເຣົາຕີ, ບໍ່ໄດ້ເຄືອງ ແຕ່ຝາ້ຽ,

ໄຫມຄວ້າງ ກໍ່ຫາກ ເຄືອງ.

ບໍ່ຄວນ ຈາເຖິງ ຊ້າງ, ເສືອສາງ ເບື້ອໃຫ່ຽ, ບາດວ່າ ເຈົ້າໄຂ້ ປ່ວຽເຣື້ອ, ຢາແກ້ ຈີບໍ່ທັນ.

ຍາມເມື່ອ ເປັນຜືນຜ້າ, ອິນທະລີ ກໍ່ຊີ່ງລ່າ, ຄັນວ່າ ແມວ ຫາກໄດ້ ເກືອກແລ້ວ,

ເຮົາຈິປ້ຽມ ຮອ່ມໃດ.

ຫຽວທາງ ນໍ້າ, ບໍ່ຄວນ ຈາເຖິງ ເງືອກງູ ນັ້ນ, ແມ່ນວ່າ ນອນຢູ່ຢ້າວ, ກໍ່ຢ່າ ຕາມ ຮຽກລົມ.
ສຸກ ບໍ່ມີ ຄວາມຮອ້ນ, ກໍ່ຢ່າ ວອນຫາ ແດດ ບໍ່ດີຕີ, ແດດແຮງ ຊໍ້າຕື່ມຮອ້ນ, ວອນນໍ້າ ກໍ່ຂາດເຂີນ.
ຫນາວ ຈິ່ງວອນ ຫາຜ້າ, ເປັນເມນ ເຮືອດໄຕ່ ເສັຽນໍ່, ໄຂ້ ຈິ່ງວອນ ຮຽກເອີ້ນ, ຫານໍ້າ ກໍ່າຄໍ່າດາຽ.
ສະຫົວແລ້ວ ບໍ່ສວາງຫວີ, ພີ່ຕາກ ຈີຄີລີ, ກິນທານ ບໍ່ຍາດນໍ້າ, ອະນິສົງເຈົ້າ ກໍ່ບໍ່ແຮງ.
ຄັນຫາກ ເປັນຄົນໃບ້, ແຍງເງົາ ບໍ່ຖາມ ແວ່ນ ກໍ່ຕາມທອ້ນ, ແມ່ຄ້າ ເສັຽເບັ້ຽໃບ້,

ຊື້ນຄ້າງ ເຄືອບທອງ.

ເສັຽດາຽ ຍຽຫນ່ວຽເປັງ, ເບັ້ຽບາດ ຊູມພູ ເພີ່ມພູ້ນ, ຊຶ່ນ ເກີດກາຽ ເປັນຄໍາ, ຜ່ອນລົງ ເສີມເບັ້ຽ.
ອັນວ່າ ທອງເຫຼືອງ ຂຶ້ນ, ກາຽຜູຽ ແສນສ່ວນ, ຄໍາຊົມພູ ຕົກບາດຊ້າ, ເກົາທີ້ນ ຄູດທວງ.
ຍິນທຸກ ອາຫະວາ, ດັ່ງດອມ ເຮືອນຝາແຖບ ອິດູເດ, ກີ້ວຕອກ ຫຼຶມທາວໄວ້, ແມງດວ້ງ ກໍ່ເລົ່າຖີ.
ຊອມດູ ສາດສນາ ສວ້ຽ, ນອນວັນ ກໍ່ຝັນຕ່າງ ເສັຽແລ້ວ, ຝັນວ່າ ໄດ້ແອ່ນມ້າ, ມະນີກາບ ຜັນຜຽອງ,

ມື ຊວາງຈັບ, ໂຮບທວນ ທັງງ້າວ.

ສົມທີ່ຄຶດ ໃສຍາເຍືອນ, ນອນຝັນ ກໍ່ເຫັນຫຼາກ, ຝັນວ່າ ໄຍຢວກ ກຮ້ຽວ, ພາຽສານ ລົ້ມທ່າວ,

ຖອນ ຖອດຖີ່ມ, ງາໄວ້ ແຄ່ດິນ.

ຝັນວ່າ ຫມາຈິກຈອກ, ໄດ້ແອ່ນຟ້າ ຜາສາດ ວິມານທິບ, ທັງເລົ່າ ທົງສັງວານ, ຍິບຍາມ ຄາວນ້ຽ.
ອັນວ່າ ຝູງແກບກອ້ງ, ກາຽເກີດ ເປັນແສງ ແມ່ເຮີ້ຽ, ກົບຂຽດ ບິນບົນເຫາະ, ເຜັນພູະໂຍມ ຄູງຟ້າ.
ອັນວ່າ ຝູງຝ້າຽເຮື້ອ, ຕົ້ນໃຫ່ຽ ເສີມຮີນ, ຄັນບໍ່ເອົາ ຂວານບັກ, ບັ່ນຟັນ ບໍ່ມີໄດ້.
ອັນວ່າ ໃບສະໂນເຕັ້ຽ, ຫົວນາ ແຄມໄຮ່ ເຮົານັ້ນ, ບັດນີ້ ຝູງໃຫ່ຽ ດົ້ວ, ກາຽຂຶ້ນ ເຜັນຄະຍູງ.
ອັນວ່າ ຫຼົວໄຫຼນໍ້າ, ແຄມນັດທີ່ ເປັນຄ່າ ແພງນັ້ນ, ອັນວ່າ ເຄືອງໄຕ້ສ້າວ, ຮາວຮົ່ວ ຄ່າແພງ.
ຝັນວ່າ ຈວງຈັນ ຄູ້, ວາງຫອມ ໄວ້ກິ່ນ ເສັຽນໍ, ອັນວ່າ ຂອນ ດອກງີ້ວ, ສະໂນຝ້າຽ ຕ່າວຫອມ.
ຝັນວ່າ ພູເຂົາ ກ້າ, ເປັນກະຈວນ ຜົງເຜົ່າ ທຸລີນັ້ນ, ເຂົາເສມົນເອົາ ປາຽທິບ, ທ່າວລົງ ທະລາຽມ້າງ.
ບາກໍ່ ໄສຍາເຍືອນ, ກາຽລະດູ ໃກ້ຮູ່ງ, ລໍ້າຕູດ ຊ້າງ ເຖິງເທົ້າ ຮອດຄົວ.
ອັນນຶ່ງ ເຜີ້ງ ຫາກວອນ, ວານໄຫ້ວ ຫາໄຟ, ເອີ້ນແດດ ກໍ່ຕາມທອ້ນ, ນ້ຳ ບໍ່ເປັນ ຫນ່ຽງໄວ້,

ມັນຈິ ເປັນກອ້ນ ຮອ່ມໄດ.

ຕາມໃຈ ເຜີ້ງ ຈິເອົາໄຟ, ຕູ້ມຮໍ່ ກໍ່ຕາມທອ້ນ, ແດດ ບໍ່ມາ ຕູ້ມຕອມ, ໃຫ້ເປັນແປ້ງ ເທົ່າຜົງ.
ເມື່ອຈັກ ໄຂລະຫັດ ອ້ຽ, ຈິພວນ ຂິນຄັດ ອ່າວດານຕີ, ໄຊ່ຈັກ ເວົ້າຕໍ່ ພ້າວ, ແຊງອວ້ນ ຈິລິ່ນເຫຼືອງ.

ເມື່ອຈັກ ໄຂລະຫັດ ງ້າວ, ເຄື່ອງສານ, ຊິຫວານ ແຊບຣົ່ນັ້ນ, ນໍ້າອ້ຽ ແວ້ນ ກິ່ງສົ້ມ,

ກໍ່ເຄື່ອງ ກວ້ຽທ່າວເຄືອ.

ເມື່ອຈັກ ໄຂລະຫັດ ຕອ້ນ, ກໍ່ເຄື່ອງແຄນ ຄ້ຽຄັ່ງ ຝາຽນັ້ນ, ປູປາ ເຕັນ,ຊັງໂຫມນຫມາງ ລອບໄປເຍີ,

ແວ້ນກິ່ງ ສ້ຽແຫ, ຊອ້ນຈິ ຄ່ຽຖາມ.

ແຍງດູໄມ້ ແຍງລຳໄກ້ ພາງກັນນັ້ງ, ຄັນວ່າ ເຫັກຣຽ, ບັກບັ້ນ ຟັນກໍ່ ຢ່າຕອ້ງ.

ແຍງ ດູນໍ້າ ແຍງ ເງົາ ດູກອ່ນ, ຫຼອນວ່າ ມີ ງເງືອກ ມາຢູ່ໄກ້, ຣາງຂາງ ຈິບໍ່ເຫັນ.

ອັນວ່າ ຫຍິງຊາຽ ໃນຫົນຫອ້ງ, ຈົ່ງຟັງກອນ ເຣົາບອກ ຈິງເທີນ,ຢ່າໄດ້ ປ້ຽແຊ່ງ ນໍ້າ ຊັງຟ້າ ດາລົມ.

ແມ່ນວ່າ ເຈົ້າ ຈັກໄປ, ຄຽດູ ຊ້າງ ພາຍສານ, ທົ່ງເຄື່ອງ ຄຳນັ້ນ, ຄັນວ່າ ເຈົ້າບໍ່ ຊາງເລືອກ,

ປຽ້ມໂພຽ ຈີ່ຕອງ, ເມື່ອລູນ ມາກແລ້ວ.

ຄັນວ່າ ເຈົ້າຢາກ ຄຽດູ ຊ້າງ, ໃຫ້ຖາມ ຄວາມດູ ກອ່ນ ດິດາຽ, ຫມັກເບົາ ເພິ່ນ ບອກໃຫ້,

ເສັ້ຽແລ້ວ ຈິງ ຄ່ຽແຍງ.

ເສືອສາງ ຟືນ ກໍ່ຢ່າ, ຈົ່ງໃຈ ຣໍ່ ມັນທອ້ນ, ສາງຫາ ທຳເພດໃບ້, ກໍ່ຢ່າ ລຶງຣໍ່ລວນ ແມ່ເຣີ້ຽ.

ຟັງເຍີ ຈິກາຈອກ, ບໍ່ຮ່ຳຣູ້ ບັ້ນບອ່ນ ເບົາຫມັກ, ຟັງເຍີ ມັກປາດ ທົ່ງ ຄຳຄິດ, ຄ່ຽຟັງ ຄຳຕ້ານ.

ຟັງເຍີ ຝູງຫມູ່ ພາລາໃບ້, ນໍລະສານ ຈິໄຂຄ່າວ ໄປນັ້ນ, ໄຂຄ່າວ ຕິດເນືອງໂຄງກາບແກ້ວ ,

ກໍ່ເປັນ ບັ້ນ ບອ່ນຈິໄຂ.

ຄັນວ່າ ຖາງທາງ ກວ້າງ, ບໍ່ຟັນ ເຄືອ ຍູງຍາງ ຈິເປັນລີ້, ມັນ ຈິກຽ້ວ ຄົມງ້າວ ຕ່າວຄືນ.

ຟັງເຍີ ຟັງຫມູ່ ຄົນຟາງໃບ້, ອູດອນ ກ້ຳຝ່າຽ ເຫນືອພຸ້ນ, ນໍລະສານ ໄຂ ໃຫ້ແຈ້ງ,

ເສັ້ຽແລ້ວ ຈິ່ງຈິຖາມ

ອັນນຶ່ງ ຈິຈຽມ ຮູ້ຕອດ, ຊ້າງສານ ມອດຊີວິດ ແມ່ເຣີ້ຽ, ປາຊິວ ຊົນ ງົວຄວາຽ, ເງືອກງູ ເຟືອນຟົ້ນ.

ຟືນໄຟ ເວົ້າຊັ້ງ, ຫຼົວ ຂອນດອກ ຈິ ຄີລີ້, ໄຟລຸກ ໄຫມ້ ແມ່ນ້ຳ, ຟອງກົ້ວ ທົ່ວວັງ.

ອາທະວາ ດັ້ງ ພາຽຖົງ ຖືຫາບ, ເມື່ອຈັກ ປົງຫາບ ໄວ້, ຍໍຫີ້ວ ຫນວງແຂນ.

ເມື່ອຈັກໄຂຕໍ່ ນ້ຳ, ກໍ່ຊ້ຳລຸ່ງ ໄຫຼກາຽ,ເມື່ອຈັກໄຂຕໍ່ ປາຊິວ, ຫຼືກໍ່ມາ ຈຽມ ນົກເຈົ່າ,

ຫຼືກໍ່ ມາຈຽມ ນົກເຈົ່າ, ເມື່ອຈັກໄຂຕໍ່ ແບ້, ກໍ່ເຄືອງແຄ້ນ ຫມາກເຂືອ.

ອັນວ່າ ຫມູຫມາ ເອີ້ນ, ເອົາເສືອ ເປັນ ພໍ່ສ່ຽວ ຈິ  ຄີລີ້, ເສືອສາງ ຍັງຈິຕັງ ຕ່າວຫນ້າ,

ຫົວຍອ້ນ ບອ່ນໄດ.

ປີນີ້ ສັງຂານ ຂຶ້ນ, ສຸລິໂຍ ຍາມທ່ຽງ, ປີນັ້ນ ເກັງທໍ່ ນ້ຳ ຖວ້ມບ້ານ, ຄຳ ຈິແລ້ງ ຢ່າຄນີງ.

ຊອມ ດູນ້ຳ ຊອມ ຜົນ, ປີໃຫມ່ ດູທອ້ນ, ລົມອອ່ນ ມາບໍ່ຕອ້ງ, ປີນັ້ນ ກົວນ້ຳ, ຈິ ລວາດເມືອງ ແມ້ເຣີ້ຽ.

ເມື່ອຈັກ ໄຂລະຫັດ ຝາ້ຽ, ຈິເຄືອງ ກົງອີ້ວ ເກົ່າ ຣົາຕິ, ແງ້ນກິ່ງ ຜ້າໄຫມ,ໄຕ້ຈິ ຕ່າວແພງ.
ແງ້ນກິ່ງ ຜ້າ ຫຼົງວາດ, ລືມຫຼຽບ ແມ່ເຣີ້ຽ, ບໍ່ໃສ່ ຄົນ ມືນທຶນ, ຫນອກມົວ ເມົາໃບ້.
ແຍກກ້ວງ ກາສາ ຜ້າ, ແຊງລະຄອນ ທາງເທັດ ພູະນົມພູນ, ແງ້ນກິ່ງ ໄດ້ ເສັ້ນດາ້ຽ,
ສະງາວ ຄ້ວາງ ແສ່ວສົນ.
ຄັນວ່າ ສາດສນາ ສ້ວຽ, ສອງພັນ ລໍ້າລວງ ໄປນັ້ນ, ເຈົ້າຈິ ແງ້ນກິ່ງ ຜ້າ, ຊາ ຊ້າງ ກໍ່ຂາດທຶນ.
ຍາມເມື່ອ ປີເດືອນ ຍັງຕັ້ງ ຫມັ້ນ, ກໍ່ຕາມໃຈ ເຈົ້າ ຈີກິ່ງ ເອົາທ້ອນ, ແມ່ນວ່າ ເຈົ້າຈິ ແງ້ນກິ່ງ ຖ້າ,
ຊາຊ້າງ ກໍ່ໂດຽໄດ້ ດັ່ງຄນິງ.
ຄັນວ່າ ເປັນດັ່ງ ຈວງຈັນ ຄູ້, ທໍາໂຮງ ມະນີໂຊດ ກໍ່ດີແລ້ວ, ບາດວ່າ ເປັນດັງ ແບ້ ເປີດນໍ້າ,
ຈີ ເກົາທົ້ມ ຄຸດທວງ.
ແຄ້ນຄັ່ງ ອາທະວາ, ດັ້ງດອມ ຝູງໄຫມ ຍອດເດີມພູ້ນ, ແງ້ນກິ່ງ ຕົກບາດຊ້າ, ຊາຝ້າຽ ເກີງເສີມ.
ອັນວ່າ ສາດສນາ ສ້ວຽ, ອັນໄດ ກໍ່ຄະຄ່ຽນ ໄປແລ້ວ, ອັນວ່າ ເດັກນ້ຽນ້ຽ, ກໍ່ມາ ລ້າວ ຕ້າງກັນ.
ເຂົາກໍ່ ແປງ ດິນໄມ້, ເປັນວຽງ ລຽນພ່າງ, ຈັບ ໄມ້ຄ້ອນ ຕັ້ງຕ່ວງ ຫາກັນ, ບາງພອງ ຖື ຫາບຊາ,
ຕິແລ້ນ ໄປມາ, ກົນລະຫົນ ສູນເຫດ ມີດາໄວ້.
ບາງພອງ ໄດ້ ກີບໄມ້, ຟ້ອນແລ່ນ ຫາກັນ, ເອົາ ຕອງ ມາເປັນ ຜາລາ, ດ່າກັນ ກູມຟ້າ.
ກົນລະຫົນ ມີ ຫຼາຽຂໍ້, ນໍລະສານ ຈີໄຂຄ່າວ, ຫມາ ຈີກຈອກ ເວົ້າບອກໃຫ້, ເຕີນບ້ານ ຊູເຮືອນ.
ເປັດໄກ່ ຊົມແຊວ ທ້ວງ, ແປງ ຄານ ແຍງຫາບ ເລີງແລ້ວ, ເຕີນ ບອກໃຫ້ອັນ ຊໍ້າ ຊັ່ງຄອນ.
ຂອງດີ ເປັນ ຂອງຮ້າຽ, ຂາຽກິນ ກໍ່ນານຂາດ, ຊູມພູ ເກົ້າບາດ ເຟື້ອງ, ທີໄດ້ ບາດສະລຶງ ແມ່ເຣີ້ຽ.
ສຸກດ່ວນ ໄກ້ ເປັນລຶກ ຊາວສາມ, ຄັນວ່າ ເນົາສັງຂານ ຈີຄ່ຽ ແລຫຼີງ ຟ້າ.
ປີໃດ ສັງຂານ ຂື້ນ, ວັນສຸກ ຍາມທ່ຽງ, ສຸກດ່ວນໄກ ລຶກຟ້າ ຊາວເກົ້າ, ເມືອງບ້ານ ຢູ່ກະເສີມ.
ປີໃດ ຍັງຢູ່ຫມັ້ນ, ມີ ລຶກ ຊາວສາມ, ປູະຫັດ ເອົາຈັນມາ ເປັນມິດ, ກໍ່ ຄ່ຽນຍາມ ເລີງແລ້ວ.
ຊອມເຍີ ປີໃດ ເຈັດສູນ ເຂົ້າ,ຕັ່ງພູ່ມ ຖ້ານຕໍ່າຊອມເຍີ, ເມືອງນັ້ນ ຮູ້ປີ້ນຂວ້ໍາ,ເລີງເລືອຽ ຄ່ຽນເສີມ.
ຄັນວ່າ ສາດສນາ ສ່ວຽ, ກໍ່ເປັນ ໂພຽ ທຸກແຫ່ງ ແມ່ຄູນເຣີ້ຽ, ຮູ້ ປີ້ນຂວໍາ ສູນຮ້າງ ຊູເມືອງ.
ສັນໃດ ເຈົ້າຈັກໄດ້, ຫນ່ວຽແກ້ວ ພຽນຍາກ, ກະທໍາອົດ ແມ່ເຣີ້ຽ, ຫາກແມ່ນ ຂອງ ມູງຄູນ,
ຫາກຈີຄູນ ເມືອຫນ້າ.
ຢ່າໄດ້ ສົນເທ, ດັ້ງ ແຄນໃຈ ຄ້ຽຄັ່ງ ສັງທ້ອນ, ທັງພູນພີ້ ເສີມແທ້, ກໍ່ທັນ ແມ່ເຣີ້ຽ.
ນໍລະສານ ຍວງກອນໃຫ້, ຝູງຟາງ ແຕ່ພໍຄ່າວ, ຍັງຢາກ ຖາມຄ່າວ ຝູງ ບອດໃບ້, ເສັຽແລ້ວ ຈີ່ລາ.
ຖາມຄ່າວ ຟືມຊາວຫ້າ, ຂັນດີ ຮ້າງກີ່ ກໍ່ຍັງລື, ອັນວ່າ ອີ້ວ ເປີດຝ້າຽ, ໄຫມ່ໄຕ້ ກໍ່ຫາກຍັງ.

ຄັນວ່າ ໄຫມ່ໄຕ້, ທາງໄດ້ ກໍ່ ຖືຄ່າ, ແຍະ ເພື່ອນພູ້ນ ກຽງນັ້ນ ຄ່ຽນເລິງ.

ເອີມເຍີມຫຼ້າ ຈິ ຫມາງກອນ, ຕອກ ອອ່ນ ກໍ່ຕາມເຍີ, ຍີງລົມ ຂັດວາດໄວ້, ມັນ ຈິຊ້າງ ຮອ່ມໃດ.

ແງ້ນກິ່ງ ຝູງນາ ເຮື້ອ, ນໍລະສານ ຈິຖາມຄ່າວ ດູນັ້ນ, ເມື່ອບໍ່ ຖາມຄ່າວ ນ້ຳ, ໄຟ ຈິໄຫມ້ ທົ່ວວັງ.

ຖາມຄາວ ໄທຽພວນ ພູ້ນ, ຫມາວເລິງ ກໍ່ເຍືອກບອກ ມາທອ້ນ, ສັງ ຈິບອກ ພາກບ້ານ,

ກະເລິງແຍ້ ຕ່າງເມືອງ.

ມື້ນຶ່ງ ສູນສາມເສັ້ນ, ຍາມຫມູ ທອດ ຫມູ ແມ່ເຮີ້ຽ, ວັນນັ້ນ ໂຊ້ກ ສົ່ງໃຫ້, ຫົວທອ້ນ ຈຶ່ງຄ່ຽຈາມ.

ບູນຫາກມາ ສົ່ງໃຫ້, ນໍລະສານ ຈິຖາມຄ່າວ, ດີທໍ່ ລາວ ບໍ່ທັນ ປ່າວຄອ້ງ, ເພິ່ນ ຈິຮູ້ ເມືອກິນ.

ຖາມຄ່າວ ໄຫມ່ເສັ້ນເຮື້ອ,ອັນເປັນ ເຄືອງຍູງຢ່າງ ກໍ່ຍັງລື,ເທື່ອນີ້ ກວ້ງເສັ້ນດ້າຽ,ໄຫມ່ໄຕ້ ຈິຄ່ຽຮຽງ.

ສ່ຽງເຍີ ພີ່ກໍ່ຍັງ ຢາກຖາມ ຄ່າວເຈົ້າ, ແຕ່ຍາມ ຕູ່ນ ຂົບມື ເພິ່ນພູ້ນ, ງົວຄວາຽ ແຍງຫົງຄຳ,

ກໍ່ເກີດຄວາມ ຖາມເຈົ້າ.

ເດືອນຫ້າ ມາບໍ່ແຈ້ງ, ສູນເມກ ມົວບົດ ແມ່ເຮີ້ຽ, ອາສະໄນ ຫົງ ຄຳຄຶດ, ຄ່ຽຟັງ ແມວ ຕ້ານ.

ຫມາວ ບໍ່ຖາມ ຫາຜ້າ, ຈິເອົາລົມ ຕູ້ມຮົ່ມ ກໍ່ຕາມທອ້ນ, ແດດ ບໍ່ລົງ ອາບນ້ຳ, ຈິນອນໄຂ ກໍ່ຊ່າງເຍີ.

ອັນວ່າ ອາສະໄນ ຮູ້, ກິນຫມູ ຫຼາຽເທື່ອ ເລິງແລ້ວ,ຍັງຢາກ ໄປປ່າວຄອ້ງ, ຟັງແຈ້ງ ຊູ້ຄົນ ແມ່ເຮີ້ຽ.

ໂອນໍ ພີ່ບໍ່ຈົນ ທາງມ້າ, ອາສະໄນ ຈິຮອ້ງປ່າວ ໄປແລ້ວ, ພີ່ຍັງ ຈັກສັງບອກ, ໃຫ້ເຫນືອໄຕ້ ທ່າເທັງ.

ແງ້ນກິ່ງ ຕາມ ສະງາວ ຝ້າຽ, ນໍລະສານ ຈີ່ຖາມຄ່າວ ໄປນັ້ນ, ຖາມຄ່າວ ແບ້ ເປີດຫຼ້າ,

ຈີ່ຊັງ ນ້ຳ ຮອ່ມໃດ.

ນໍລະສານ ຫ້າງຊ້າງ ແລ້ວ, ອາສະໄນ ຈິຄາດເຄື່ອງ, ສົມທີ່ຄຶດ ຫົງຂຶດແລ້ວ, ຖືດາບ  ພູະຂັນໄຊ,

ຮວາຽອາຄົມ ເປົ່າໄປ ເປັນນ້ຳ.

ມະນີ ໂຊດແກ້ວ, ທຳໂຮງ ສູບສອດ, ຊົງ ດາບເປືອງ ປີ່ນຫນ້າ, ມາແລ້ວ ຊັ່ງເມືອງ.

ຄ່ຽຢູ່ ດີເຍີ ໂພສີສ້ຽ, ນາຫຼວງ ກ້ານກອ່ງ ອີ່ຮຽມເຮີ້ຽ, ຢ່າໄດ້ ຄຶດໂສກເສົ້າ, ພາກ້ານ ຫຼົ້ນເຫຼືອງ.

ຄ່ຽຢູ່ ດີເຍີ ໄກສອນແກ້ວ, ບົວທອງ ມະນີໂຊດ ອີ່ຮຽມເຮີ້ຽ, ເອີ້ນຊັ່ງບ້ານ ເມືອງກວ້າງ ຊູ້ຄົນ.

ຄ່ຽຢູ່ ດີເຍ ໄກສອນແກ້ວ, ເຂົາຂຽວ ກ້ານກອ່ງ ງາມເດ, ເອີ້ນຊັ່ງໄມ້ ໄຊຽກວ້າງ ຮົ່ມງາມ.

ໂອນໍ ງາມເດ ງາມກອງເຂົ້າ, ງາມເຟືອງ ເຂົ້າໃຫ່ມ, ເອີ້ນຊັ່ງເລົ້າ ທັງເຂົາ ຢູ່ເຍັຽ.

ຢູ່ເຍີ ຜາສາດແກ້ວ, ມະນີໂຊດ ດວງປີ ພີເຮີ້ຽ, ທັງສນາມໄຊຽ ແຂກໂຮມ ຂູນຄ້າ.

ຢູ່ເຍີ ແຊງລະຄອນ, ຜ້າແສງ ພັນທາງເທັດ, ເຢັຽເພິ່ນພູ້ນ ທັງພີ້ ພີ່ຈີລາ.

ຢູ່ດີເຍີ ໂຄມຊາວຫ້າ, ຖືຕາລ່ຳ ບໍ່ເປີດ ອີ່ຮຽມເຮີ້ຽ, ເອີນຊັ່ງ ແຖວດອກໄມ້, ພວງຮ້ຽ ເຮືອເຮືອງ.

ຢູ່ດີເຍີ ໄຫມ ເສັ້ນກຽງ, ເປັນພວ່ງ ສົນແສ່ວ ອີ່ຮຽມເຮີ້ຽ, ເອີນຊັ່ງ ດາຽ, ທັງຝ້າຽ ຫມູ່ໄນ.

ຢູ່ດີເຍີ ໂກສາ ເກົ້າ, ຂຽວເຫົາ ກ້ຽງອ່ອນ ອີ່ຣຽມເຣີ້ຽ, ເອີນຊັ່ງ ບ້ານ, ດວງຫນ້າ ຊູ້ຄົນ.
ຍາມມະນຸດ ໃນຫົນຫ້ອງ, ສາມປະການ ແວນຍິ່ງ, ຫອມ ດອກໄມ້ ໂຣຽເຣົາ ເມື່ອແລງ.
ຢູ່ດີເຍີ ພິດານ ແກ້ວ, ດວງຄຳ ເຣືອງເຣືອ, ກົບ ຂາບໄຫ້ວ, ດີແລ້ວ ພີ່ຈີລາ.
ຢູ່ດີເຍີ ແກ້ວລອດຟ້າ, ແຖນຮໍ່ ລົງມາ ພີ່ເຣີຽ, ພີ່ຈັກລາ ກີສີນ, ດ່ອນໄປ ວັນນີ້.
ກໍ່ເພື່ອວ່າ ເຈົ້າຫາກ ທຳເລັດລ້ຽວ, ສັດຈະຣ່າງ ວາຈາ, ອັນວ່າ ຄຳແພງເຣົ້າ, ຂາດເສັຽ ແສນນັ້ນ.
ກໍ່ເພື່ອ ໂທເລ ຣ້າງ, ກຳເດົາ ຫົນສະວາດ, ລະນ້ອງໄວ້ ຕົວຂ້ຽ ມີງມອນ ແມ່ເຣີຽ.
ຄ້ອນວ່າ ເຈົ້າ ສັງແລ້ວ, ກົ້ມກາບ ລີລາ, ຣວາຽ ອາຄົມ ເພີກລົມ ທັງນ້ຳ.
ສົມທີ່ຄຶດ ຜາຽຜຽອງ, ຂື້ນຄີ່ ມ້າ, ມືຄວາ ຖືດາບ, ມະນີກາບ ເຕັ້ນໄຕ້, ນ້ຳ ທະຍານ ຂື້ນ ຣິດບົນ.
ສົມທີ່ຄຶດ ຂື້ນເມືອ ເມືອງແກ້ວ, ມະຫາພົມ ດວງຍອດ, ມີຫມູ່ສາວ ຟາກຟ້າ, ມາລ້ອມ ຫມື່ນປາຽ.
ອັນວ່າ ສົມທີ່ຄຶດ, ຄວນຄ່າລ້ານ ມະນີໂຊ, ລູກປະເສີດ ຫມົດແລ້ວ, ຖວາຽແກ່ ນັກປາດເຈົ້າ,
ທົງແຈ້ງ ຊູ້ຕົນ ແດ່ທ້ອນ.
ບໍ່ໄຊ້ວ່າ ເປັນຄົນຫຼິ້ນ, ວາຈາເວົ້າ ມໍ່ສັນນັ້ນ, ຕັ້ງວ່າ ເປັນຄວາມ, ເລີກແລບ ລ້ຳຫຽມ,
ພື້ນໂລກ ກະດີ ພູ້ນດາຽ.
ຝູງຫມູ່ ພາລາໃບ້, ບໍ່ມີ ຖອງເຖີງ ວ່າຽ ຊີວັງເຣີຽ, ມີແຕ່ ນັກປາດເຈົ້າ, ຕົນຮູ້ ຈີ່ງຈີ່ຖອງ ແມ່ເຣີຽ.
ສົມທີ່ຄຶດ ຈົບບໍ່ລິບູນ ແຕ່ເທົ່ານີ້, ມູນບໍ່ມີ ຈະຂຽນຕໍ່ ໄປນັ້ນ, ມູນເພີ່ນ ຫມົດເທົ່ານີ້, ຈະຫາໄດ້ ກໍ່ບໍ່ຄື.
ລີຈະນາແລ້ວ ຍາມກອງແລງ, ເຈົ້າຜູ້ແພງ ສີສ້ຽ, ເສນຫາ ທີບພູະຄີ່ນ ອີນພົມເຣີຽ,
ເຊີນ ອາດຍານາງ ແລລ່ຳ ຢ້ຽມ, ໄປຜ້ຽນ ຊູ້ຕົວ ແດ່ທ້ອນ.-/-

---

( Texte transcrit du livre imprimé le 30/05/2004 par son Altesse Royale
Tiao Fa Nging Savivang Savang Manivong )